ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ　　　　　　　　　　　　ເລກທີ 29 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

# ມະຕິ

## ກອງປະຊຸມສະພາແຫ່ງຊາດ

## ວ່າດ້ວຍການຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງສະພາແຫ່ງຊາດ

- ອີງຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ ປີ 2020 ມາດຕາ 59, ຂໍ້ທີ 4 ກ່ຽວກັບການລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີຜ່ານມາ ແລະ ທິດທາງແຜນການ ປະຈຳປີຕໍ່ໜ້າ;
- ອີງຕາມທິດທາງແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 04/ຄປຈ, ລົງວັນທີ 27 ເມສາ 2021;
- ອີງຕາມການພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງສະພາແຫ່ງຊາດ ດ້ວຍຄະແນນສຽງເປັນເອກະສັນ ໃນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງວັນທີ 16 ພະຈິກ 2021.

ຜ່ານການພິຈາລະນາຢ່າງເລິກເຊິ່ງ, ຖີ່ຖ້ວນຂອງສະມາຊິກສະພາແຫ່ງຊາດ ຕໍ່ບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງສະພາແຫ່ງຊາດ ແລະ ບົດປະກອບຄຳເຫັນຂອງສູນກາງແນວລາວສ້າງຊາດ ໃນວາລະການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງວັນທີ 8 ພະຈິກ 2021

### ກອງປະຊຸມ ຕົກລົງ:

**ມາດຕາ 1　ຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2021**

ກອງປະຊຸມ ເຫັນດີຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2021 ຊຶ່ງໄດ້ຍົກໃຫ້ເຫັນຜົນງານດ້ານດີ, ຂໍ້ຄົງຄ້າງ, ບັນດາສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້. ອັນພົ້ນເດັ່ນ, ສະພາແຫ່ງຊາດ ຊຸດທີ IX ໄດ້ປະຕິບັດພາລະບົດບາດດ້ານນິຕິບັນຍັດ ໃນການສ້າງ ແລະ ປັບປຸງກົດໝາຍສຳເລັດ ຈຳນວນ 13 ສະບັບ; ການປະຕິບັດພາລະບົດບາດຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຢູ່ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ, ກອງປະຊຸມສະໄໝວິສາມັນ, ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໄດ້ຮັບຜົນສຳເລັດ ຊຶ່ງເປັນ

ບ່ອນອີງໃຫ້ແກ່ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ການປະຕິບັດພາລະບົດບາດ ດ້ານການຕິດຕາມກວດກາ ໄດ້ດຳເນີນໃນຮູບແບບການຮັບຟັງລາຍງານ, ການປະຊຸມຮ່ວມ ຂອງຄະນະປະຈຳສະພາແຫ່ງຊາດ ກັບລັດຖະບານ ແລະ ພາກສ່ວນທີ່ກ່ຽວຂ້ອງ; ການສ້າງຄວາມເຂັ້ມແຂງ, ການເຄື່ອນໄຫວວຽກງານການຕ່າງປະເທດ ແລະ ການເຄື່ອນໄຫວວຽກງານອື່ນ ກໍໄດ້ດຳເນີນສອດຄ່ອງກັບສະພາບການໃໝ່.

ຄຽງຄູ່ກັບຜົນງານ ກໍຍັງມີຂໍ້ຄົງຄ້າງຈຳນວນໜຶ່ງ ເປັນຕົ້ນ ການຈັດຕັ້ງຜັນຂະຫຍາຍແຜນວຽກຈຸດສຸມຂອງຄະນະປະຈຳສະພາແຫ່ງຊາດ ເຂົ້າໃນການເຄື່ອນໄຫວວຽກງານຂອງກົງຈັກເລຂາທິການສະພາແຫ່ງຊາດ ຈຳນວນໜຶ່ງຍັງຊັກຊ້າ, ການປະສານສົມທົບກັບ ພາກສ່ວນກ່ຽວຂ້ອງ ໃນການກະກຽມເນື້ອໃນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ບາງບໍ່ທັນໄດ້ດີເທົ່າທີ່ຄວນ, ການປະສານງານ ລະຫວ່າງກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ ກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ ບໍ່ທັນໄດ້ຫຼາຍ ຍ້ອນການແຜ່ລະບາດຂອງພະຍາດໂຄວິດ-19.

**ມາດຕາ 2 ຮັບຮອງເອົາແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022**

ກອງປະຊຸມ ເຫັນດີຮັບຮອງເອົາແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ດັ່ງນີ້:

1. **ດ້ານນິຕິບັນຍັດ:** ສະພາແຫ່ງຊາດ ເພີ່ມທະວີການປະສານສົມທົບກັບບັນດາອົງການ ທີ່ມີສິດໃນການສະເໜີສ້າງ ແລະ ປັບປຸງກົດໝາຍ ເພື່ອຮັບປະກັນເຮັດໃຫ້ບັນດາເນື້ອໃນຮ່າງກົດໝາຍ ມີຄຸນນະພາບ ແລະ ບັນລຸຕາມແຜນການທີ່ວາງໄວ້ ໂດຍສຸ້ມໃສ່ໃຫ້ໄດ້ຈຳນວນ 30 ສະບັບ ໃນນີ້, ກົດໝາຍສ້າງໃໝ່ 12 ສະບັບ, ກົດໝາຍປັບປຸງ 18 ສະບັບ; ຕິດຕາມຊຸກຍູ້ກະຊວງ, ອົງການຍົກສູງຄວາມຮັບຜິດຊອບໃນການໂຄສະນາເຜີຍແຜ່ກົດໝາຍ ໃຫ້ໄດ້ຢ່າງກວ້າງຂວາງ, ແທດເໝາະກັບຕົວຈິງ ແລະ ສອດຄ່ອງກັບແຕ່ລະເປົ້າໝາຍ;

2. **ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ:** ເອົາໃຈໃສ່ຍົກສູງຄວາມຮັບຜິດຊອບຂອງສະພາແຫ່ງຊາດ ໃນການຄົ້ນຄວ້າພິຈາລະນາບັນຫາສຳຄັນຕ່າງໆ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ເພື່ອນຳໄປຜ່ານກອງປະຊຸມສະໄໝສາມັນ ເທື່ອທີ 3 ແລະ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX; ນຳພາ-ຊີ້ນຳໃນການເພີ່ມທະວີການປະສານສົມທົບເຊິ່ງກັນ ແລະ ກັນ ຂອງບັນດາກົງຈັກພາຍໃນສະພາແຫ່ງຊາດ, ລະຫວ່າງສະພາແຫ່ງຊາດ ກັບບັນດາອົງການອື່ນຂອງລັດ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນການປະຕິບັດສິດ, ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ໃນການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍຜ່ານກອງປະຊຸມປະຈຳເດືອນຂອງຕົນ ໃຫ້ຮັບປະກັນຄຸນນະພາບນັບມື້ດີຂຶ້ນ;

3. **ດ້ານການຕິດຕາມກວດກາ:** ເພີ່ມທະວີຄວາມຮັບຜິດຊອບບັນດາກົງຈັກຂອງສະພາແຫ່ງຊາດ, ຂອງຄະນະປະຈຳສະພາແຫ່ງຊາດ ໃນການສ້າງແຜນການ ແລະ ຜັນຂະຫຍາຍແຜນການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ເປັນແຜນການລະອຽດຂອງຕົນ ຢ່າງມີຈຸດສຸມ ແລະ ສຸ້ມໃສ່ຈັດຕັ້ງປະຕິບັດໃຫ້ໄດ້ຮັບປະສິດທິຜົນ ຊຶ່ງປີ 2022 ສະພາແຫ່ງຊາດ ຈະສຸມໃສ່ຕິດຕາມກວດກາ ບັນຫາສຳຄັນຕົ້ນຕໍ ດັ່ງນີ້:

1) ຕິດຕາມກວດກາ ຜ່ານກົນໄກການດຳເນີນກອງປະຊຸມຮ່ວມ ລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ລວມທັງການຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ຂອງບັນດາອົງການຈັດຕັ້ງດັ່ງກ່າວ;

2) ຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂົງເຂດເສດຖະກິດ-ການເງິນ ແລະ ເງິນຕາ, ຂົງເຂດວັດທະນະທຳ-ສັງຄົມ, ຂົງເຂດອື່ນ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ໂດຍສະເພາະ ການຕິດຕາມກວດກາຂອງບັນດາຫ້ອງທຶນຕ່າງໆ;

3) ຕິດຕາມກວດກາ ການຜັນຂະຫຍາຍບັນດາມາດຕາຂອງກົດໝາຍ ທີ່ໄດ້ກຳນົດໃຫ້ອອກເປັນນິຕິກຳ ໃຕ້ກົດໝາຍສະເພາະ ຂອງບັນດາກະຊວງ, ອົງການທີ່ກ່ຽວຂ້ອງ;

4) ຕິດຕາມກວດກາ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃຫ້ເປັນຮູບປະທຳ; ຕິດຕາມກວດກາ ໂຄງການລົງທຶນຂະໜາດໃຫຍ່ຈຳນວນໜຶ່ງ ທີ່ເຫັນວ່າມີຄວາມຫຍຸ້ງຍາກ, ສັບສົນ ຫຼື ມີຜົນກະທົບຢ່າງຫຼວງຫຼາຍ ຕໍ່ການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າ;

5) ເອົາໃຈໃສ່ຄົ້ນຄວ້າ, ປັບປຸງກົນໄກການແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການເຮັດທົດລອງຮັບ ແລະ ແກ້ໄຂຄຳຮ້ອງຂໍຄວາມເປັນທຳ; ຕິດຕາມກວດກາ ຜ່ານກົນໄກການດຳເນີນກອງປະຊຸມຄົບຄະນະປະຈຳປີ ຂອງບັນດາທ່ານປະທານ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ຕິດຕາມກວດກາ ຜ່ານສາຍດ່ວນກອງປະຊຸມສະພາແຫ່ງຊາດ.

**4. ການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ:**

1) ນຳພາ-ຊີ້ນຳການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ຕິດພັນກັບການປະຕິບັດພາລະບົດບາດ ດ້ານນິຕິບັນຍັດ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ດ້ານການຕິດຕາມກວດກາ ຂອງສະພາແຫ່ງຊາດ;

2) ຊີ້ນຳການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ດ້ວຍການຈັດກອງປະຊຸມສຳມະນາໃນຫົວຂໍ້ຈຳນວນໜຶ່ງ ເປັນຕົ້ນ ການສ້າງຄຳຖາມເຈາະຈີ້ມ, ການກະກຽມປົດປະກອບຄຳເຫັນ, ການສ້າງ ແລະ ປັບປຸງນິຕິກຳ ແລະ ວຽກງານອື່ນ ທີ່ມີຄວາມຈຳເປັນຈຳນວນໜຶ່ງ;

3) ຍົກສູງຂີດຄວາມສາມາດໃຫ້ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທາງດ້ານວິຊາສະເພາະ ໂດຍຜ່ານກອງປະຊຸມຝຶກອົບຮົມສຳມະນາ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມຄວາມສາມາດຕົວຈິງ;

4) ເອົາໃຈໃສ່ຊີ້ນຳ, ຕິດຕາມ ແລະ ຊຸກຍູ້ພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງ, ປົກປັກຮັກສາອາຄານຂອງສະພາແຫ່ງຊາດ ຢ່າງເປັນລະບົບປົກກະຕິ ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານ; ສືບຕໍ່ຄົ້ນຄວ້າປະກອບວັດຖຸອຸປະກອນ, ເຄື່ອງກອງປະຊຸມທາງໄກ, ການຄຸ້ມຄອງວຽກງານບໍລິຫານ-ງົບປະມານ ແລະ ອື່ນໆ ຕາມນະໂຍບາຍຂອງລັດວາງອອກ.

**5. ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ**

1) ເພີ່ມທະວີການປະສານສົມທົບກັບສະພາປະຊາຊົນຂັ້ນແຂວງ, ຄະນະພັກ, ອົງການປົກຄອງທ້ອງຖິ່ນ ສືບຕໍ່ຄົ້ນຄວ້າການປັບປຸງກົງຈັກການຈັດຕັ້ງຂອງສະພາປະຊາຊົນຂັ້ນແຂວງ, ການເກັບກຳຂໍ້ມູນແຕ່ຫົວທີ ເພື່ອກະກຽມວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນຕໍ່ໜ້າ;

2) ເອົາໃຈໃສ່ໃນການດຳເນີນກອງປະຊຸມຮ່ວມ ລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ເພື່ອປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງສະພາແຫ່ງຊາດ ແລະ ລາຍງານສະພາບພົ້ນເດັ່ນ ຢູ່ແຕ່ລະເຂດເລືອກຕັ້ງ;

3) ເອົາໃຈໃສ່ສົມທົບກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໃນການປັບປຸງລະບອບແບບແຜນວິທີເຮັດວຽກ ແລະ ກົນໄກການປະສານກັບສະພາປະຊາຊົນຂັ້ນແຂວງ ແນໃສ່ຍົກສູງບົດບາດການເຄື່ອນໄຫວວຽກງານໃຫ້ມີປະສິດທິຜົນສູງຂຶ້ນ ເປັນຕົ້ນ ການກະກຽມກອງປະຊຸມສະໄໝສາມັນ ຂອງສະພາປະຊາຊົນຂັ້ນແຂວງ, ການສ້າງນິຕິກຳ, ການຕົກລົງບັນຫາສຳຄັນຂອງທ້ອງຖິ່ນ, ການຕິດຕາມກວດກາ ລວມທັງການສ້າງສິ່ງອຳນວຍຄວາມສະດວກໃນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ພາກສ່ວນອື່ນໆກ່ຽວຂ້ອງ;

4) ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ນຳເອົາຄຳເຫັນຂອງສູນກາງແນວລາວສ້າງຊາດ ທີ່ປະກອບ ຢູ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ຊຶ່ງກ່ຽວຂ້ອງກັບທ້ອງຖິ່ນຕົນ ສົມທົບກັບອຳນາດການປົກຄອງ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າແກ້ໄຂໃຫ້ສຳເລັດໂດຍໄວ.

**6. ການເຄື່ອນໄຫວວຽກງານການຕ່າງປະເທດ:** ເອົາໃຈໃສ່ຄົ້ນຄວ້າກຳນົດແຜນການເຄື່ອນໄຫວວຽກງານການຕ່າງປະເທດ ປະຈຳປີ 2022 ຢ່າງມີຈຸດສຸມ ແລະ ສອດຄ່ອງກັບສະພາບເງື່ອນໄຂແບບໃໝ່ ແນໃສ່ຍົກສູງບົດບາດຂອງສະພາແຫ່ງຊາດ ແຫ່ງ ສປປ ລາວ ໃນພາກພື້ນ ແລະ ສາກົນ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ກົງຈັກຂອງສະພາແຫ່ງຊາດ, ກົງຈັກຂອງຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ, ອົງການອື່ນຂອງລັດ, ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**